ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)**

ເລກທີ 0594/ທລຍ
ວັນທີ 13 JUN 2016

# ບົດສະຫຼຸບປະຈຳເດືອນ ພຶດສະພາ 2016
# ແລະ ແຜນວຽກເດືອນ ມິຖຸນາ 2016

ຕົກມາຮອດທ້າຍເດືອນ ພຶດສະພາ 2016 ການຈັດຕັ້ງປະຕິບັດໂຄງການແມ່ນມີຄວາມຄືບໜ້າຢ່າງເປັນຮູບປະທຳດັ່ງນີ້ຄື:

ໃນວັນທີ 25 ພຶດສະພາ 2016 ທີ່ຫ້ອງຮັບແຂກຊັ້ນ I ຂອງຫ້ອງການສຳນັກງານນາຍົກລັດຖະມົນຕີ, ທ່ານ ນາງ ຊາລີ ເບີນນິ່ງແຮມ (Sally Burningham), ຫົວໜ້າຫ້ອງການທະນາຄານໂລກປະຈຳ ສປປ ລາວ ພ້ອມດ້ວຍຄະນະ ໄດ້ເຂົ້າລາຍງານກ່ຽວກັບການຮອງຮັບໃຫ້ທຶນມູນຄ່າ 30 ລ້ານໂດລາສະຫະລັດ ທີ່ມີທຶນສົບທົບລັດຖະບານ ມູນຄ່າ 6 ລ້ານໂດລາສະຫະລັດ ເພື່ອສືບຕໍ່ຈັດຕັ້ງປະຕິບັດໂຄງການ ທລຍ ໄລຍະທີ III, ເປັນກຽດຕ້ອນຮັບ ແລະ ພົບປະຕາງໜ້າໃຫ້ລັດຖະບານໂດຍ ທ່ານ ສົມສະນິດ ສຸວັນນະລາດ, ຮອງລັດຖະມົນຕີ, ຮອງຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ພ້ອມດ້ວຍຄະນະ ແລະ ຜູ້ຕາງໜ້າກອງທຶນຫຼຸດຜ່ອນຄວາມທຸກຍາກເຂົ້າຮ່ວມຢ່າງພ້ອມພຽງ. ໃນຕອນທ້າຍ ທ່ານ ນາງ ຊາລີ ໄດ້ກ່າວສະແດງຄວາມຂອບໃຈມາຍັງລັດຖະບານລາວທີ່ໃຫ້ການຮ່ວມມື ແລະ ສະໜັບສະໜູນການຈັດຕັ້ງປະຕິບັດວຽກງານ ຂອງ ທລຍ ໃນໄລຍະຜ່ານມາ ແລະ ຕໍ່ໜ້າໃຫ້ບັນລຸຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້. ພ້ອມກັນນັ້ນ, ທ່ານ ນາງ ຊາລີ ມີຄວາມຕ້ອງການໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຕ້ອງປະສານສົມທົບກັນ ແລະ ມີແຜນພັດທະນາໄປລວງດຽວກັນ ເພື່ອຮັບປະກັນການພັດທະນາຊົນນະບົດຢູ່ ສປປ ລາວ ໃຫ້ມີປະສິທິພາບ ແລະ ປະສິດທິຜົນ ດີຂຶ້ນເລື້ອຍໆໃນອະນາຄົດ.

ທາງທະນາຄານໂລກຍັງໄດ້ມີຄວາມເປັນຫ່ວງກ່ຽວກັບພື້ນທີ່ ແລະ ຈຸດທີ່ຕັ້ງຂອງການຈັດຕັ້ງປະຕິບັດ ທລຍ 3 ໂດຍລວມແມ່ນຍັງສືບຕໍ່ຈະຈັດຕັ້ງປະຕິບັດຢູ່ 10 ແຂວງ ຄືກັບ ທລຍ 2 ແຕ່ອາດຈະມີການປ່ຽນແປງກ່ຽວກັບຈຳນວນກຸ່ມບ້ານໂດຍຈະເນັ້ນໃສ່ກຸ່ມບ້ານທີ່ທຸກຍາກທີ່ສຸດທີ່ບໍ່ໄດ້ຮັບການຊ່ວຍເຫຼືອຈາກ ທລຍ. ສຳລັບການຄິດໄລ່ງົບປະມານແມ່ນຈະອີງໃສ່ຈຳນວນປະຊາກອນເປັນຫຼັກ, ຖ້າບ່ອນໃດຫຍຸ້ງຍາກແມ່ນຈະຄິດໄລ່ຕາມໄລຍະທາງ ແລະ ລະດັບຄວາມທຸກຍາກ. ສິ່ງດັ່ງກ່າວແມ່ນກຳລັງປຶກສາຫາລືເພື່ອໃຫ້ຜູ້ໃຫ້ທຶນເຫັນດີນຳຮູບແບບດັ່ງກ່າວ.

ໜຶ່ງໃນວຽກງານທີ່ສຳຄັນສຳລັບການກະກຽມໂຄງການ ທລຍ ໄລຍະທີ III ແມ່ນການປັບປຸງ ແລະ ອອກແບບ ລະບົບຕິດຕາມ-ປະເມີນຜົນຂອງ ທລຍ. ເພື່ອສົ່ງເສີມຊຸກຍູ້ວຽກງານນີ້, ທາງຫົວໜ້າພະແນກ ຕິດຕາມ-ປະເມີນຜົນ, ຫົວໜ້າພະແນກ ພັດທະນາຊຸມຊົນ ແລະ ຫົວໜ້າພະແນກ ວິສະວະກຳ ໄດ້ເຂົ້າຮ່ວມການຝຶກອົບຮົມ ແລະ ແລກປ່ຽນ ບົດຮຽນກ່ຽວກັບລະບົບຕິດຕາມ-ປະເມີນຜົນ ຄັ້ງວັນທີ 18-19 ພຶດສະພາ 2016 ທີ່ເມືອງ ຮາໂນຍ, ປະເທດ ຫວຽດນາມ. ນອກຈາກນີ້, ໃນທ້າຍເດືອນ ພຶດສະພາ 2016 ທາງພະແນກ ຕິດຕາມ-ປະເມີນຜົນ ຍັງໄດ້ຈັດການຝຶກ ອົບຮົມສ້າງຄວາມເຂັ້ມແຂງກ່ຽວກັບວຽກງານຕິດຕາມ-ປະເມີນຜົນ ໂດຍການວ່າຈ້າງຄູຝຶກທີ່ເປັນທີ່ປຶກສາຈາກ ຕ່າງປະເທດ. ການຝຶກອົບຮົມດັ່ງກ່າວໄດ້ມີການເຂົ້າຮ່ວມໂດຍຫົວໜ້າພະແນກ ແລະ ໜ່ວຍງານ, ພະນັກງານຕິດຕາມ ປະເມີນຜົນທຸກທ່ານ ຈາກຂັ້ນສູນກາງ ແລະ ຈຳນວນ 1 ທ່ານ ຈາກແຂວງ ສະຫວັນນະເຂດ ລວມທັງໝົດ 15 ທ່ານ. ການຝຶກອົບຮົມດັ່ງກ່າວໄດ້ສຸມໃສ່ນະວັດຕະກຳ ແລະ ເຄື່ອງມືໃໝ່ຕ່າງໆທີ່ມີປະໂຫຍດ ແລະ ປະສິດທິພາບຕໍ່ ກັບວຽກງານຕິດຕາມ-ປະເມີນຜົນ ເປັນຕົ້ນແມ່ນການເກັບກຳຂໍ້ມູນ ແລະ ລະບົບຖານຂໍ້ມູນແບບ ອອນລາຍ (online). ຫຼັງຈາກການຝຶກອົບຮົມ ທີ່ນະຄອນຫຼວງວຽງຈັນ ສຳເລັດລົງ, ຜູ້ເຂົ້າຮ່ວມ ຍັງໄດ້ເດີນທາງໄປທີ່ຂອນແກ່ນ, ປະເທດໄທ ເພື່ອແລກປ່ຽນບົດຮຽນກ່ຽວກັບວຽກງານຕິດຕາມ-ປະເມີນຜົນ ຈາກສະຖາບັນແມ່ຂອງ (Mekong Institute) ທີ່ມີ ປະສົບການວຽກງານສ້າງຄວາມເຂັ້ມແຂງຫຼາຍກວ່າ 20 ປີ.

## 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 1.1. ຮອບວຽນ 13 (ສົກປີ 2015-2016)

ການຈັດຕັ້ງປະຕິບັດ ຮອບວຽນ 13 ເຊິ່ງເປັນຮອບວຽນສຸດທ້າຍຂອງໂຄງການ ທລຍ ໄລຍະທີ 2 ທັງເປັນ ໄລຍະເຊື່ອມຕໍ່ລະຫວ່າງ ທລຍ ໄລຍະທີ 2 ແລະ ໄລຍະທີ 3 ແມ່ນມີຈຳນວນທັງໝົດ 507 ໂຄງການ ທີ່ໄດ້ສົ່ງຂໍ ອະນຸມັດຈັດຕັ້ງປະຕິບັດຈາກຜູ້ໃຫ້ທຶນ ເຊິ່ງສ່ວນໃຫຍ່ແມ່ນໄດ້ຮັບການອະນຸມັດຈາກຜູ້ໃຫ້ທຶນແລ້ວ. ໃນໂຄງການທັງ ໝົດໃນຮອບວຽນດັ່ງກ່າວ, ມີຈຳນວນຫຼາຍກວ່າເຄິ່ງໜຶ່ງ ແມ່ນໂຄງການກ່ຽວຂ້ອງກັບຂະແໜງການສຶກສາ ແລະ ຖືວ່າ ເປັນບູລິມະສິດຫຼັກໃນ ຮອບວຽນ 13 ເພາະວຽກງານສຶກສາແມ່ນມີບົດບາດສຳຄັນງານລຶບລ້າງຄວາມທຸກຍາກ. ໃນຈຳນວນທັງໝົດ 507 ໂຄງການ, 110 ໂຄງການ ເປັນໂຄງການພາຍໃຕ້ທຶນສົມທົບລັດຖະບານ ເຊິ່ງໄດ້ແບ່ງເປັນ 2 ງວດ. ສຳລັບງວດທີ 1 ຈຳນວນ 52 ໂຄງການ, ທັງໝົດແມ່ນຈັດຕັ້ງປະຕິບັດສຳເລັດແລ້ວ ແລະ ງວດທີ 2 ຈຳນວນ 58 ໂຄງການ ແມ່ນກຳລັງຢູ່ໃນຂັ້ນຕອນຂໍອະນຸມັດຈັດຕັ້ງປະຕິບັດ. ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບຈຳນວນ ໂຄງການຕາມແຕ່ລະຂະແໜງການແມ່ນມີດັ່ງລຸ່ມນີ້:

ຕາຕະລາງ 1. ຈຳນວນໂຄງການທັງໝົດ ທີ່ໄດ້ຂໍອະນຸມັດການຈັດຕັ້ງປະຕິບັດໃນ ຮອບວຽນ 13 (ສົກປີ 2015-2016) ຕາມຂະແໜງການ

| ຂະແໜງການ | ຈຳນວນໂຄງການ |
|---|---|
| ຂະແໜງ ກະສິກຳ ແລະ ປ່າໄມ້ | 20 |
| ຂະແໜງ ສຶກສາ | 273 |
| ຂະແໜງ ພະລັງງານ ແລະ ບໍ່ແຮ່ | 0 |
| ຂະແໜງ ສາທາລະນະສຸກ | 20 |
| ຂະແໜງ ຄົມມະນາຄົມ | 78 |
| ຂະແໜງ ນ້ຳສະອາດແລະສຸຂະອະນາໄມ | 116 |
| ລວມ | **507**[1] |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 31 ພຶດສະພາ 2016*

## 1.2. ຮອບວຽນ 12 (ສົກປີ 2014-2015)

ສຳລັບຮອບວຽນ 12 (ສົກປີ 2014-2015) ມີຈຳນວນທັງໝົດ 438 ໂຄງການຍ່ອຍ ໃນນັ້ນຈຳນວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 432 ໂຄງການເທົ່າກັບ 98.6%, ທີ່ຍັງເຫຼືອຈຳນວນ 6 ໂຄງການແມ່ນມີຄວາມຄືບໜ້າຫລາຍກວ່າ 50% ດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 59 | 0 | 0 | 0 |
| ສາລະວັນ | 31 | 29 | 2 | 0 | 0 |
| ຊຽງຂວາງ | 42 | 42 | 0 | 0 | 0 |
| ຜົ້ງສາລີ | 25 | 24 | 1 | 0 | 0 |
| ຫລວງນ້ຳທາ | 21 | 21 | 0 | 0 | 0 |
| ຫົວພັນ | 124 | 124 | 0 | 0 | 0 |
| ຫຼວງພະບາງ | 48 | 47 | 1 | 0 | 0 |
| ອຸດົມໄຊ | 50 | 49 | 1 | 0 | 0 |
| ອັດຕະປື | 18 | 17 | 1 | 0 | 0 |
| ເຊກອງ | 20 | 20 | 0 | 0 | 0 |
| ລວມ | **438** | **432** | **6** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 31 ພຶດສະພາ 2016*

[1] ແມ່ນຈຳນວນໂຄງການທັງໝົດທີ່ໄດ້ສົ່ງໜັງສືຂໍອະນຸມັດຈັດຕັ້ງປະຕິບັດຈາກຜູ້ໃຫ້ທຶນ. ຈຳນວນໂຄງການຕົວຈິງອາດຈະມີການປ່ຽນແປງຫຼັງຈາກຂັ້ນຕອນການອະນຸມັດສຳເລັດ.

### ຕາຕະລາງ 3. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 41 | 41 | 0 | 0 | 0 |
| ຄົມມະນາຄົມ | 75 | 73 | 2 | 0 | 0 |
| ສາທາລະນະສຸກ | 25 | 25 | 0 | 0 | 0 |
| ສຶກສາ | 165 | 161 | 4 | 0 | 0 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 130 | 130 | 0 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 2 | 2 | 0 | 0 | 0 |
| ລວມ | **438** | **432** | **6** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ພຶດສະພາ 2016*

### ຕາຕະລາງ 4. ທຶນສົມທົບລັດຖະບານຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 15 | 15 | 0 | 0 | 0 |
| ສາລະວັນ | 12 | 10 | 2 | 0 | 0 |
| ຊຽງຂວາງ | 13 | 13 | 0 | 0 | 0 |
| ຫົວພັນ | 21 | 21 | 0 | 0 | 0 |
| ອັດຕະປື | 10 | 9 | 1 | 0 | 0 |
| ເຊກອງ | 3 | 3 | 0 | 0 | 0 |
| ລວມ | **74** | **71** | **3** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ພຶດສະພາ 2016*

### ຕາຕະລາງ 5. ທຶນສົມທົບລັດຖະບານຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 9 | 9 | 0 | 0 | 0 |
| ຄົມມະນາຄົມ | 6 | 4 | 2 | 0 | 0 |
| ສາທາລະນະສຸກ | 8 | 8 | 0 | 0 | 0 |
| ສຶກສາ | 26 | 25 | 1 | 0 | 0 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 24 | 24 | 0 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 1 | 1 | 0 | 0 | 0 |
| ລວມ | **74** | **71** | **3** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ພຶດສະພາ 2016*

### 1.3 ຮອບວຽນ 11 (ສົກປີ 2013-2014)

ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ເມສາ 2016 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 331 ໂຄງການ (99%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ຈຳນວນທີ່ຍັງເຫຼືອ 2 ໂຄງການ ທັງໝົດແມ່ນມີຄວາມຄືບໜ້າຫລາຍກວ່າ 50% ຄາດວ່າຈະສຳເລັດໃນມື້ໆນີ້.

ຈາກຕາຕະລາງຂ້າງລຸ່ມນີ້ 2 ໂຄງການທີ່ບໍ່ທັນສຳເລັດ ແລະ ກຳລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 6. ໂຄງການທີ່ຫຼ້າຊ້າໃນຮອບວຽນ 11

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ນາແລ | ພູຫຼວງ | ພູຫຼວງມີກຈີງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ລອງ | ບອກບໍ່ (ຈ່າໃໝ່ ) | ແສນຈຸມປ(ຈ່າປີ) | 65 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ພຶດສະພາ 2016*

2 ໂຄງການດັ່ງກ່າວແມ່ນຢູ່ ແຂວງ ຫຼວງນ້ຳທາ ຄືໂຄງການທົດລອງ ເຊິ່ງເປັນໂຄງການໃຫຍ່ຮ່ວມມືລະຫວ່າງ ທລຍ ແລະ ອົງການເຮວິຕັດ (Hevitas) ຄວາມລ່າຊ້າຍ້ອນຄວາມເຂັ້ມງວດໃນການກວດກາດ້ານຄຸນະພາບຂອງເຫຼັກ ແລະ ແບບໃນການກໍ່ສ້າງລວມທັງງົບປະມານທີ່ມີຢ່າງຈຳກັດ. ປະຈຸບັນແມ່ນພວມຄົ້ນຄວ້າຫາທິດທາງທີ່ເໝາະສົມເພື່ອແກ້ໄຂ ແລະ ຍັງບໍ່ສາມາດຕອບໄດ້ວ່າມື້ໃດຈຳສຳເລັດ.

## 2. ງົບປະມານ ແລະ ການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ພຶດສະພາ 2016 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 100% ເທົ່າກັບ 61,114,300,917 ກີບ, ຮອບວຽນ 10 ເບີກຈ່າຍໄປແລ້ວ 79,125,251,302 ກີບ ເທົ່າກັບ 100% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈຳນວນ 77,212,429,889 ກີບ ຫລື ເທົ່າກັບ 99.7% ຂອງງົບປະມານທັງໝົດ ແລະ ສຳລັບຮອບວຽນ 12 ງົບປະມານທັງໝົດ 83,336,963,608 ກີບ ເບີກຈ່າຍໄປແລ້ວ 81,121,658,438 ກີບ ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 7. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2016)

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 61,114,300,917 | 0 |
| ຮອບວຽນ 10 (2012-2013) | 393 | 79,125,251,302 | 392 | 79,125,251,302 | 0 |
| ຮອບວຽນ 11 (2013-2014) | 333 | 77,447,824,567 | 331 | 77,212,429,889 | 235,394,678 |
| ຮອບວຽນ 12 (2014-2015) | 438 | 83,336,963,608 | 432 | 81,121,658,438 | 2,215,305,169 |
| ລວມ | **1,426** | **301,024,340,394** | **1,416** | **298,573,640,546** | **2,450,699,847** |
| ແຜນການເບີກຈ່າຍງົບປະມານໂຄງການຍ່ອຍ ຮອບວຽນ 13 (2015-2016) | | | | | |
| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ | |
| ຮອບວຽນ 13 (ສົກປີ 2015-2016) | 507[2] | 13[3] ລ້ານໂດລາສະຫະລັດ | - | ການເບີກຈ່າຍນັ້ນໄດ້ແບ່ງເປັນ 2 ງວດຄື: ງວດທີໜຶ່ງ ແມ່ນເບີກຈ່າຍ ໃນລະຫວ່າງເດືອນ ມັງກອນ-ກັນຍາ 2016 ແລະ ງວດທີສອງແມ່ນໃນລະຫວ່າງເດືອນ ຕຸລາ-ທັນວາ ຂອງປີ 2016. | |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ແລະ ພະແນກບໍລິຫານ-ການເງິນ, ທລຍ, 31 ພຶດສະພາ 2016*

## 3. ວຽກປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ (LN)

### 3.1. ກິດຈະກໍາປັບປຸງຊີວິດການເປັນຢູ່

#### 3.1.1. ການທ້ອນເງິນ

- ແຂວງຫົວພັນ: ແຂວງດັ່ງກ່າວມີເມືອງເປົ້າໝາຍທີ່ເຂົ້າຮ່ວມ ໂຄງການ ປພຊ ທັງໝົດ 4 ເມືອງ ຄື: ເມືອງຮ້ຽມ, ເມືອງ ຊ່ອນ,ເມືອງ ຫົວເມືອງ ແລະ ເມືອງຊຽງຄໍ້ ແລະ ມີບ້ານເປົ້າໝາຍທັງໝົດ 92 ບ້ານ, 388 ກຸ່ມ, ທີ່ມີ ຈໍານວນສະມາຊິກທັງໝົດມີ 5,604 ຄົນ,ໃນນີ້ເປັນຍິງ ຈໍານວນ 4,036 ຄົນ. ການທ້ອນເງິນພາຍໃນເດືອນ ເມສານີ້ ຢູ່ 4 ເມືອງເປົ້າໝາຍ ມີລັກສະນະເປັນປົກກະຕິ ແລະ ໝັ້ນຄົງ ເມື່ອທຽບໃສ່ເດືອນທີ່ຜ່ານມາ. ລວມຍອດທັງມົດຂອງເງິນຝາກຂອງສະມາຊິກທັງໝົດ ພາຍໃນບ້ານເປົ້າໝາຍ ຊຶ່ງສາມາດສັງລວມໄດ້ດັ່ງນີ້: ລວມຍົກຍອດມາຈາກເດືອນເມສາ ທັງໝົດມີ ຈໍານວນ 298,157,000 ກີບ ແລະ ເງິນທ້ອນພາຍໃນເດືອນ ພຶດສະພາ ບັນລຸໄດ້ 35,311,000 ກີບ ແລະ ລວມທັງໝົດຈາກຍົກຍອດເດືອນ 3 ມີທັງໝົດ 333,468,000 ກີບ.

---

[2] ແມ່ນຕົວເລກວາງແຜນຂັ້ນເມືອງ ອາດຈະມີການປ່ຽນແປງຫຼັງຈາກສໍາຫຼວດອອກແບບ ແລະ ອະນຸມັດຈາກຜູ້ໃຫ້ທຶນ

[3] ງົບປະມານອາດຈະມີການປ່ຽນແປງຫຼັງຈາກສໍາຫຼວດອອກແບບ ແລະ ອະນຸມັດຈາກຜູ້ໃຫ້ທຶນ

- ແຂວງສະຫວັນນະເຂດ: ສ່ວນແຂວງດັ່ງກ່າວ ມີ ເມືອງເປົ້າໝາຍທັງໝົດ 3 ເມືອງ ທີ່ເຂົ້າຮ່ວມກິດຈະກຳຂອງ ກຊກ ຄື: ເມືອງ ເຊໂປນ ແລະ ເມືອງນອງ ແລະ ເມືອງທ່າປາງທອງ (ແຂວງສະຫັວນນະເຂດ)ລວມທັງໝົດ ມີ: 73 ບ້ານ, 307 ກຸ່ມ, ສະມາຊິກທັງໝົດມີ 3,720 ຄົນ,ຍິງມີ 3,388 ຄົນ. ການຝາກເງິນຂອງສະມາຊິກມີ ລັກສະນະໝັ້ນຄົງ. ຈຳນວນເງິນຝາກທັງໝົດໃນເດືອນ ພຶດສະພາ 2016 ມູນຄ່າ 40,797,000 ກີບ ແລະ ລວມ ຍົກຍອດມາຈາກເດືອນ ເມສາ ທັງໝົດມີ : 188,529,000 ກີບ, ລວມທັງໝົດຍອດເງິນຝາກພາຍໃນເດືອນນີ້ ມີ ມູນຄ່າ 175,994,000ກີບ.

### 3.1.2. ການປ່ອຍເງິນໃຫ້ສະມາຊິກກູ້ຢືມ

ສ່ວນການປ່ອຍເງິນກູ້ໃຫ້ສະມາຊິກຍັງມີຈຳນວນຈຳກັດ ເນື່ອງມາຈາກມູນຄ່າເງິນທ້ອນໜ້ອຍ ແລະ ໄດ້ນຳໃຊ້ເງິນ ຕົ້ນທຶນຈາກ ທລຍ ເປັນທຶນສົມທົບສຳລັບການປ່ອຍກູ້ໃຫ້ ສະມາຊິກໄດ້ທັງໝົດ 4,279 ຄົນ ທີ່ຢູ່ ເມືອງເປົ້າໝາຍເກົ່າ 4 ເມືອງ. ການກູ້ຢືມຂອງສະມາຊິກສ່ວນໃຫຍ່ ແມ່ນການລົງທຶນສຳລັບທຳການຜະລິດເຊັ່ນ: ການປູກຝັງ, ການລ້ຽງສັດ , ການລ້ຽງປາ, ການລ້ຽງກົບ ແລະ ຫັດຖະກຳຕ່ຳຫູກ. ມາຮອດປະຈຸບັນ ໄດ້ປ່ອຍເງິນກູ້ ຢູ່ 4 ເມືອງ ທັງໝົດ 4,131,934,000 ກີບ ເທົ່າກັບ 81 % ຂອງຕົ້ນທຶນທັງໝົດຈຳນວນ 5,093,193,744 ກີບ. ແລະ ຍັງບໍ່ທັນໄດ້ ປ່ອຍມີ 1,125,477,744 ກີບ.

### 3.1.3 ການສ້າງລາຍຮັບ

ການສ້າງລາຍຮັບທັງໝົດ ແມ່ນໄດ້ຈາກກິດຈະກຳຕ່າງໆ ເຊັ່ນ: ການລ້ຽງໄກ່, ການລ້ຽງປາ ,ການຕ່ຳຫູກ, ການລ້ຽງ ໝູ, ລ້ຽງແບ້ ແລະ ອື່ນໆ. ການສ້າງລາຍຮັບໃນເດືອນນີ້ແມ່ນໄດ້ສູງພໍສົມຄວນເພາະເຂົາເຈົ້າໄດ້ລ້ຽງໃນລະດູຝົນ ແລະ ໄດ້ຈຳໜ່າຍອອກໃນລະດູແລ້ງ. ສະນັ້ນລາຍຮັບຈຶ່ງສູງພໍສົມຄວນ . ສ່ວນເດືອນ ພຶດສະພາ 2016 ສ້າງລາຍຮັບໄດ້ ທັງໝົດມີ 1,836,955,000 ກີບ.

### 3.2. ວຽກງານດ້ານໂພຊະນາການ

ວຽກງານດ້ານໂພຊະນາການໃນ 1 ເດືອນຜ່ານມາໄດ້ມີການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວເປັນປົກກະຕິຢູ່ແຕ່ລະ ສະໂມສອນໂພຊະນາການ (VNC) ຂອງແຕ່ລະເມືອງໂດຍນຳໃຊ້ງົບປະມານທີ່ຍັງເຫລືອຢູ່ແຕ່ລະສະໂມ ສອນ ຕາມ ງົບປະມານຂອງທາງເມືອງໄດ້ວ່າງໄວ້. ວຽກທີ່ປະຕິບັດໃນເດືອນນີ້ມີ 2 ເມືອງ ເຊໂປນ ກັບ ຣ້ຽມມີຢູ່ 4 ກິດຈະກຳ ຫລັກເຊັ່ນ: 1 ການປຸງແຕ່ງອາຫານກາງເວັນ; 2ໂພຊະນາສຶກສາ ; 3 ໂພຊະນາການ ແມ່ ແລະ ເດັກ ; 4 ກິດຈະກຳ ສວນຄົວ.

ຕາຕະລາງ 7. ສັງລວມ ງົບປະມານທີ່ນຳໃຊ້ ໃນແຕ່ລະເມືອງ ຂອງ ສະໂມສອນໂພຊະນາການເດືອນ ພຶດສະພາ 2016

| ລ/ດ | ຊື່ ເມືອງ | ຈ/ນ VNC | ງົບປະມານ | ເງິນໃນບັນຊີ | ເງິນສົດ | ຈ/ນ ເງິນທີ່ໄດ້ຈ່າຍ | ຈ/ນ ເງິນທີ່ຍັງເຫລືອໃນບັນຊີ |
|---|---|---|---|---|---|---|---|
| 1 | ມ. ຮ້ຽມ | 6 | 389,503,000 | 160,187,000 | 1,407,500 | 229,316,000 | 230,723,500 |
| 2 | ມ. ຊອນ | 2 | 217,210,000 | 8,240,000 | 15,409,500 | 118,109,500 | 99,100,500 |
| 3 | ມ. ເຊໂປນ | 4 | 594,518,000 | 244,947,000 | 0 | 349,571,000 | 244,947,000 |
| 4 | ມ. ນອງ | 4 | 282,834,000 | 390,000 | 0 | 0 | 30,390,000 |
| ລວມທັງໝົດ: | | 16 | 1,484,065,000 | 413,764,000 | 16,817,000 | 696,996,500 | 605,161,000 |

## 4. ແຜນວຽກປະຈຳເດືອນມິຖຸນາ 2016

- ໃນລະຫວ່າງວັນທີ 14-17 ມິຖຸນາ 2016, ທ່ານ ຫົວໜ້າພະແນກ ຕິດຕາມ-ປະເມີນຜົນ ແລະ ຫົວໜ້າໜ່ວຍງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ ຈະໄດ້ເດີນທາງໄປທີ່ເມືອງ ຊາປາ, ປະເທດ ຫວຽດນາມ ເພື່ອເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນ ກ່ຽວຮູບແບບກັບການພັດທະນາ ທີ່ຈັດຕັ້ງປະຕິບັດໂດຍຊຸມຊົນ (Aia Regional Conference on Community Driven Development) ຮ່ວມກັບກັບບັນດາກຸ່ມປະເທດພາຍໃນອາຊີ ແລະ ເຂດປາຊີຟິກ.
- ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນທີ 13 ເພື່ອໃຫ້ທຸກໂຄງການສາມາດຈັດຕັ້ງປະຕິບັດສຳເລັດກ່ອນປິດໂຄງການ ທລຍ ໄລຍະທີ 2 ໄປຄຽງຄູ່ກັບການກະກຽມວຽກງານ ທລຍ ໄລຍະທີ 3 ເປັນຕົ້ນການວາງແຜນ, ການຝຶກອົບຮົມພະນັກງານ ແລະ ການທົບທວນພາລະບົດບາດຕ່າງໆ.
- ປຶກສາຫາລືກັບຜູ້ໃຫ້ທຶນເພື່ອພິຈາລະນາກ່ຽວກັບເນື້ອທີ່ເພື່ອການຈັດຕັ້ງປະຕິບັດ ທລຍ 3 ໂດຍສະເພາະແມ່ນການຄັດເລືອກກຸ່ມບ້ານເປົ້າໝາຍ ແລະ ການຄິດໄລ່ງົບປະມານ.
- ອີກວຽກໜຶ່ງທີ່ສຳຄັນແມ່ນສືບຕໍ່ອອກແບບລະບົບຕິດຕາມ-ປະເມີນຜົນຂອງ ທລຍ ເປັນຕົ້ນກ່ຽວກັບລະບົບຖານຂໍ້ມູນທີ່ຕ້ອງເລັ່ງໃສ່ແບບຟອມຕ່າງໆທີ່ກ່ຽວຂ້ອງກັບຂໍ້ມູນຈຳເປັນທີ່ກ່ຽວຂ້ອງກັບຕົວຊີ້ວັດ ແລະ ການບໍລິຫານໂຄງການ.

ຜູ້ອຳນວຍການບໍລິຫານ ທລຍ

ຕ.ພ.ທ.ລ ຜູ້ອຳນວຍການ ບໍລິຫານ

ບຸນກວ້າງ ສຸວັນນະພັນ

ຮອງຫົວໜ້າພະແນກ ຕິດຕາມ-ປະເມີນຜົນ

ດາວວຽງ ໄຊຍະຈັກ

ສັງລວມ ແລະ ລາຍງານ

ສິດທິເດດ ກິ່ງວົງສາ